**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 1860 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 02 ມິຖຸນາ 2026

# ແຈ້ງການ

**ເຖິງ**: - ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ, ເມືອງ ແລະ ນະຄອນ.
- ສະມາຄົມຍານພາຫະນະ ແລະ ຫົວໜ່ວຍດຳເນີນທຸລະກິດຈຳໜ່າຍພາຫານະທາງບົກ.

**ເລື່ອງ**: ການອະນຸຍາດດຳເນີນທຸລະກິດຈຳໜ່າຍພາຫະນະທາງບົກ ຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ສະບັບເລກທີ 470/ລບ, ລົງວັນທີ 17 ທັນວາ 2019.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1990/ອຄ, ລົງວັນທີ 09 ກັນຍາ 2025.
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 2093/ຫສນຍ, ລົງວັນທີ 22 ທັນວາ 2025.

**ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານຊາບວ່າ:**

ໂດຍອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 2093/ຫສນຍ, ລົງວັນທີ 22 ທັນວາ 2025 ແລະ ເງື່ອນໄຂຂອງດຳລັດ 470/ລບ, ລົງວັນທີ 17 ທັນວາ 2019 ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການຄຸ້ມຄອງການຈຳໜ່າຍຍານພາຫະນະທາງບົກທັງໝົດໃຫ້ເຂົ້າສູ່ລະບົບ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດຈຶ່ງແຈ້ງມາຍັງທ່ານປະຕິບັດດັ່ງນີ້:

1. **ການອອກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍ ຍານພາຫານະທາງບົກ**

- ໃຫ້ຈັດຕັ້ງປະຕິບັດ ການຄົ້ນຄວ້າອອກອະນຸຍາດດຳເນີນທຸລະກິດຈຳໜ່າຍຍານພາຫະນະທາງບົກ (ລວມທັງຫົວໜ່ວຍທີ່ຂຶ້ນທະບຽນກ່ອນມີແຈ້ງການໂຈະ ຕາມແຈ້ງການ ສະບັບເລກທີ 1042/ຫອຄ ແລະ ຫົວໜ່ວຍທີ່ຂຶ້ນທະບຽນວິສາຫະກິດໃໝ່);
- ທຸກຫົວໜ່ວຍທຸລະກິດ ຕ້ອງມີເງື່ອນໄຂຄົບຖ້ວນ ແລະ ເຂັ້ມງວດດ້ານທຶນຈົດທະບຽນ ຕາມທີ່ກຳນົດໄວ້ໃນດຳລັດ 470/ລບ (ທຶນຈົດທະບຽນ 50 ຕື້ກີບຂຶ້ນໄປ ສຳລັບຍານພາຫະນະ 4 ລໍ້ຂຶ້ນໄປ) ແລະ ຂໍ້ຕົກລົງແບ່ງຂັ້ນຄຸ້ມຄອງ ສະບັບເລກທີ 0023/ອຄ, ລົງວັນທີ 06 ມັງກອນ 2022.

- ທຸກການອອກອະນຸຍາດດຳເນີນທຸລະກິດຈຳໜ່າຍຍານພາຫະນະທາງບົກ ຕ້ອງໄດ້ສຳເນົາເອກະສານເປັນເອເລັກໂຕຣນິກ (ຜ່ານການສະແກນ ຫຼື ຮູບຖ່າຍເອກະສານ) ແລ້ວສົ່ງໃຫ້ກົມການຄ້າພາຍໃນ ເພື່ອຕິດຕາມ ແລະ ກວດກາຄືນ.

2. **ມາດຕະການດ້ານສະຖານທີ່ ແລະ ຮ້ານຈຳໜ່າຍຍານພາຫະນະທາງບົກ**

- ຜູ້ດຳເນີນທຸລະກິດຕ້ອງມີສະຖານທີ່ວາງຈຳໜ່າຍ ແລະ ສາງເກັບຮັກສາຍານພາຫະນະ ທີ່ໄດ້ຮັບອະນຸຍາດປຸກສ້າງ ແລະ/ຫຼື ຢັ້ງຢືນມາດຕະຖານເຕັກນິກຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ຢ່າງຖືກຕ້ອງ;
- ຕ້ອງມີສັນຍາເປັນຕົວແທນຈຳໜ່າຍ ທີ່ຖືກຕ້ອງຕາມກົດໝາຍ ກັບວິສາຫະກິດການນຳເຂົ້າ-ສົ່ງອອກ ຫຼື ຜູ້ຜະລິດ/ປະກອບພາຍໃນປະເທດ (ຍົກເວັ້ນຮ້ານຂາຍຍານພາຫະນະມືສອງ).
- ສຳລັບຮ້ານຈຳໜ່າຍຍານພາຫະນະທາງບົກມືສອງຕ້ອງມີສັນຍາຊື້ຂາຍ ແລະ ແຫຼ່ງທີ່ມາຈະແຈ້ງຖືກຕ້ອງ.

3. **ການບໍລິການຫຼັງການຂາຍ ແລະ ອາໄຫຼ່**

- ທຸກຫົວໜ່ວຍທຸລະກິດ ຕ້ອງມີສະຖານທີ່ຮອງຮັບການບໍລິການຫຼັງການຂາຍ ທີ່ມີອາໄຫຼ່ ແລະ ອຸປະກອນເຕັກນິກທີ່ພຽງພໍ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າ;
- ຕ້ອງມີນາຍຊ່າງກົນຈັກສະເພາະດ້ານ ທີ່ມີໃບຢັ້ງຢືນຜ່ານຫຼັກສູດການຮຽນ ຫຼື ຝຶກອົບຮົມການສ້ອມແປງຍານພາຫະນະໂດຍກົງປະຈຳການ (ຕາມກົດໝາຍ ແລະ ລະບຽບການກຳນົດ).

4. **ການຮັບປະກັນ ແລະ ການປົກປ້ອງຜູ້ຊົມໃຊ້:** ຜູ້ດຳເນີນທຸລະກິດຕ້ອງຮັບປະກັນຄຸນນະພາບຂອງຍານພາຫະນະທີ່ຕົນຈຳໜ່າຍ ໂດຍຕ້ອງມີເອກະສານຢັ້ງຢືນຄຸນນະພາບ ແລະ ໄລຍະເວລາການຮັບປະກັນທີ່ຊັດເຈນຈາກໂຮງງານຜະລິດ ຫຼື ບໍລິສັດແມ່. ການຊື້-ຂາຍ ຕ້ອງເຮັດຜ່ານລະບົບບັນຊີທີ່ຖືກຕ້ອງ ແລະ ຊຳລະຜ່ານລະບົບທະນາຄານທີ່ຕັ້ງຢູ່ ສປປ ລາວ ເພື່ອເປັນຫຼັກຖານທາງກົດໝາຍ.

5. **ມາດຕະການຈັດຕັ້ງປະຕິບັດ ແລະ ການລາຍງານ**

- ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ, ເມືອງ ແລະ ນະຄອນ ເອົາໃຈໃສ່ຕິດຕາມ, ກວດກາ ແລະ ຊຸກຍູ້ໃຫ້ຫົວໜ່ວຍທຸລະກິດທີ່ເປີດກ່ອນໜ້ານີ້ ທີ່ຍັງບໍ່ທັນສອດຄ່ອງ ໃຫ້ຮີບຮ້ອນປັບປຸງຕົນເອງໃຫ້ຄົບເງື່ອນໄຂ;
- ໃຫ້ມີການສະຫຼຸບລາຍງານ ປະຈຳງວດ, ປີ (ຊື່ບໍລິສັດທີ່ຂຶ້ນທະບຽນວິສາຫະກິດໃໝ່, ບໍລິສັດທີ່ຂໍຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດ ແລະ ບໍລິສັດທີ່ລະເມີດມາດຕະການ) ສົ່ງໃຫ້ກົມການຄ້າພາຍໃນ.
- ແຈ້ງການສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການ ສະບັບເລກທີ 1042/ຫອຄ, ລົງວັນທີ 20 ພຶດສະພາ 2025.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດ.

**ຫົວໜ້າຫ້ອງການ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ປອ. ບົວວັນ ວິລະວົງ